ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 52/ສພຂ.ຊຍ

ໄຊຍະບູລີ, ວັນທີ 23 ກໍລະກົດ 2025

# ມະຕິ

## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ
## ວ່າດ້ວຍການຮັບຮອງເອົາ ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 11 ເມືອງ ຂອງແຂວງໄຊຍະບູລີ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2025 ມາດຕາ 78 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ມາດຕາ 60 ຂອງກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ມາດຕາ 33 ຂອງກົດໝາຍ ວ່າດ້ວຍອົງການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 75/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີ ຂອງທ່ານເຈົ້າແຂວງໄຊຍະບູລີ ສະບັບເລກທີ 208/ຈຂ, ລົງວັນທີ 21 ກໍລະກົດ 2025.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ໜັງສືສະເໜີ ຂອງອົງການປົກຄອງແຂວງ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດ II ຄັ້ງວັນທີ 23 ກໍລະກົດ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາການແຕ່ງຕັ້ງ ປະທານຄະນະກຳມະການປົກຄອງເມືອງ 11 ເມືອງ ຂອງແຂວງໄຊຍະບູລີ ເຊິ່ງມີລາຍຊື່ ດັ່ງນີ້:

1. ທ່ານ ຈັນເພັງ ອູ່ທອງຄຳ ເປັນປະທານຄະນະກຳມະການປົກຄອງ ເມືອງໄຊຍະບູລີ;
2. ທ່ານ ໄລ ອິນທິບ ເປັນປະທານຄະນະກຳມະການປົກຄອງ ເມືອງຄອບ;
3. ທ່ານ ບຸນຈັນ ແກ້ວວິຊາ ເປັນປະທານຄະນະກຳມະການປົກຄອງ ເມືອງຊຽງຮ່ອນ;
4. ທ່ານ ອິນເນດ ຂຽວສີຟ້າ ເປັນປະທານຄະນະກຳມະການປົກຄອງ ເມືອງເງິນ;
5. ທ່ານ ແຫຼ້ ອ່ອນສີມບຸນ ເປັນປະທານຄະນະກຳມະການປົກຄອງ ເມືອງຫົງສາ;
6. ທ່ານ ສົມສະນິດ ວົງສີ ເປັນປະທານຄະນະກຳມະການປົກຄອງ ເມືອງໄຊສະຖານ;
7. ທ່ານ ຄຳພັນ ຄຳພູບົວ ເປັນປະທານຄະນະກຳມະການປົກຄອງ ເມືອງພຽງ;

8. ທ່ານ ບຸນສິງ ລາດຊະວົງ ເປັນປະທານຄະນະກຳມະການປົກຄອງ ເມືອງປາກລາຍ;

9. ທ່ານ ສົມຫວັງ ສີສົມພອນ ເປັນປະທານຄະນະກຳມະການປົກຄອງ ເມືອງທົ່ງມີໄຊ;

10. ທ່ານ ສີຄານ ແກ່ນມະນີ ເປັນປະທານຄະນະກຳມະການປົກຄອງ ເມືອງແກ່ນທ້າວ;

11. ທ່ານ ອານຸສິດ ມະໂນສິນ ເປັນປະທານຄະນະກຳມະການປົກຄອງ ເມືອງບໍ່ແຕນ

**ມາດຕາ 2** ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນທຸກຂັ້ນ, ສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ບັນດາທ່ານທີ່ຖືກຮັບຮອງເອົາການແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງມີລັນ ຄຳພັນເພັງ